ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ກັນຍາ 2026

ປີທີ 15

ສະບັບທີ 1080

## ຜົນກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນສິງຫາ



(ສພຊ) - ຕອນແລງວັນທີ 25 ສິງຫານີ້ ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ຄຳຜາ ພິມມະສອນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນສິງຫາ 2026 ເຊິ່ງທ່ານກ່າວວ່າ: ກອງປະຊຸມໄດ້ໄຂຂຶ້ນໃນວັນທີ 24 ແລະ ອັດລົງໃນວັນທີ 25 ສິງຫາທີ່ສຳນັກງານນາຍົກ

ອ່ານຕໍ່ໜ້າ 5



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ປະຕິບັດຫຼັກການສະເໝີພາບລະຫວ່າງຍິງກັບຊາຍ ໃນທຸກດ້ານຄື: ດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ; ຕ້ານແນວຄິດໝິ່ນປະໝາດ, ຂົ່ມເຫັງແມ່ຍິງ ເປັນຕົ້ນແມ່ນແມ່ຍິງເຜົ່າຊົນທີ່ມີພົນລະເມືອງຈຳນວນໜ້ອຍ, ພ້ອມກັນນັ້ນກໍຕ້ານແນວຄິດຕີຕົວຕ່ຳຂອງແມ່ຍິງເອງ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 139)

ອ່ານຕໍ່ສະບັບໜ້າ

## ຮັກສາການແທນປະທານສະພາແຫ່ງຊາດ ປະກາດກົງຈັກການຈັດຕັ້ງຢູ່ ສປນວ



(ສພຊ) - ວັນທີ 20 ສິງຫາ 2026, ທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮັກສາການແທນປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ເຂົ້າຮ່ວມພິທີປະກາດພະນັກງານການນຳຂອງສະພາ

ອ່ານຕໍ່ໜ້າ 8

## ນາງ ສູນທອນ ໄຊຍະຈັກ ເຮັດວຽກຢູ່ ແຂວງສະຫວັນນະເຂດ ແລະ ແຂວງຄຳມ່ວນ



ອ່ານຕໍ່ໜ້າ 4

## ຄະນະຜູ້ແທນສະພາແຫ່ງຊາດ ລາວ-ຫວຽດນາມ ພົບປະສອງຝ່າຍທີ່ພະນົມເປັນ



(ສພຊ) - ວັນທີ 26 ສິງຫາ 2026, ຄະນະຜູ້ແທນສະພາແຫ່ງຊາດສປປ ລາວ ນຳໂດຍສະຫາຍ ນາງ ສູນທອນ ໄຊຍະຈັກ ຮັກສາການແທນປະທານສະພາແຫ່ງຊາດ ໄດ້ພົບປະສອງຝ່າຍກັບຄະນະຜູ້ແທນສະພາແຫ່ງຊາດ ສສ.ຫວຽດນາມ ນຳໂດຍສະຫາຍ ນາງ ຫງວຽນ ຖິແທັງ (Nguyễn Thị Thanh) ຮອງປະທານສະພາແຫ່ງຊາດ ໃນໂອກາດການເດີນທາງໄປເຂົ້າຮ່ວມ

ອ່ານຕໍ່ໜ້າ 8

## ຄປຈສພຊ ອວຍພອນວັນຊາດຫວຽດນາມ



(ສພຊ)-ຕອນສວາຍວັນທີ 26 ສິງຫານີ້, ສະຫາຍ ມອນໄຊ ລາວມົວຊື່ງ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມຄະນະ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ນຳເອົາກະຕ່າດອກໄມ້ໄປອວຍພອນສະຖານທູດຫວຽດນາມປະຈຳລາວ ໃນໂອກາດວັນສະຖາປະນາສາທາລະນະລັດ ສັງຄົມນິຍົມຫວຽດນາມ ຄົບຮອບ 81 ປີ

ອ່ານຕໍ່ໜ້າ 3

## ກອດກາເນື້ອໃນຮ່າງກົດໝາຍການຈະລາຈອນທາງບົກ




(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການຈະລາຈອນທາງບົກ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ26-27 ສິງຫາ 2026 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເຂົ້າຮ່ວມເປັນປະທານ ແລະ ກ່າວເປີດຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ (ກໝຍທ), ມີທ່ານ ຈັນທະ

ອ່ານຕໍ່ໜ້າ 4

# ຕິດຕາມກວດກາ ແລະ ຊຸກຍູ້ ຂະແໜງການ ຂົງເຂດວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ




(ສພຊ) - ວັນທີ 17-21 ສິງຫາ 2026, ທ່ານ ແກ້ວຈະເລີນ ເຊຍຢັ້ງຢ່າງ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ຂະແໜງການໃນຂົງເຂດວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ຢູ່ 3 ແຂວງ ຄື: ຜົ້ງສາລີ, ຫຼວງນ້ຳທາ ແລະ ບໍ່ແກ້ວ ໂດຍໄດ້ເຂົ້າພົບປະທ່ານເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເພື່ອແຈ້ງຈຸດປະສົງຂອງການເຄື່ອນໄຫວວຽກງານຄັ້ງນີ້.



ໃນການເຄື່ອນໄຫວ ໄດ້ຈັດກອງປະຊຸມຮ່ວມກັບພະແນກສຶກສາທິການ ແລະ ກິລາ, ພະແນກສາທາລະນະສຸກ, ພະແນກວັດທະນະທຳ ແລະ ການທ່ອງທ່ຽວ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ແນວລາວສ້າງຊາດ, 3ອົງການຈັດຕັ້ງມະຫາຊົນ, ຫ້ອງວ່າການ ແລະ ກອງບັນຊາການ ປກສ ເພື່ອຊຸກຍູ້ການແກ້ໄຂບັນຫາການຂາດແຄນຄູ, ການເຂົ້າຮຽນຂອງເດັກ 5 ປີ, ການປະລະການຮຽນ, ການປັບປຸງຄຸນນະພາບຂອງຄູ ແລະ ນັກຮຽນ, ການກະກຽມຄວາມພ້ອມເພື່ອເປີດສົກຮຽນໃໝ່ ສົກຮຽນ 2026-2027. ສູ້ຊົນຈັດຕັ້ງປະຕິບັດ6ຄາດໝາຍທີ່ມີຄວາມສ່ຽງທີ່ຈະບໍ່ບັນລຸ ໃຫ້ບັນລຸໄດ້ຕາມແຜນການ; ອັດຕາການເກີດລູກມີແພດຊ່ວຍ, ອັດຕາການໃຫ້ວັກຊີນກັນພະຍາດໃນເດັກລຸ່ມ 1 ປີ, ບັນຫາການຂາດສານອາຫານໃນເດັກລຸ່ມ 5 ປີ, ຂະຫຍາຍຕາໜ່າງການບໍລິການສາທາລະນະສຸກຢ່າງທົ່ວເຖິງ ພ້ອມທັງປັບປຸງການບໍລິການ; ສະໜອງຢາໃຫ້ພຽງພໍ, ມີຄຸນນະພາບ, ເປັນທຳ, ວ່ອງໄວ, ທັນສະໄໝ; ຄົ້ນຄວ້າຈັດສັນງົບປະມານໃຫ້ແກ່ການສັກວັກຊີນກຸ່ມເປົ້າໝາຍ ໃຫ້ຄົບຖ້ວນແລະທັນຕາມກຳນົດເວລາ. ການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະສາຂາວິຊາຮຽນ ແລະ ວິຊາຊີບ ໃຫ້ສອດຄ່ອງກັບທ່າອຽງຂອງຍຸກສະໄໝ ແລະ ໄປລວງດຽວກັບຍຸດທະສາດການພັດທະນາເສດຖະກິດໄລຍະຍາວຂອງບັນດາຂະແໜງການ ເພື່ອຍົກສະມັດຖະພາບການຜະລິດໃຫ້ສູງຂຶ້ນ ພ້ອມທັງໃຫ້ເອົາໃຈໃສ່ຂະຫຍາຍສູນພັດທະນາສີມືແຮງງານຢ່າງພຽງພໍ; ການປັບປຸງ ແລະ ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ໃຫ້ມີປະສິດທິພາບ ສາມາດເຊື່ອມຕໍ່ກັບລະບົບຂໍ້ມູນຂອງ 5 ຂະແໜງການທີ່ກ່ຽວຂ້ອງນັບທັງສູນກາງ, ທ້ອງຖິ່ນ ແລະ ພາກສ່ວນທຸລະກິດ; ປັບປຸງມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 6 ສາຂາອາຊີບແລະສ້າງໃໝ່ມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 4 ສາຂາອາຊີບ; ຄຸ້ມຄອງບັນດາວິສາຫະກິດໃນການນຳເຂົ້າແຮງງານຕ່າງປະເທດ. ເພີ່ມທະວີການປຸກລະດົມຮັບບໍລິຈາກເລືອດແລະສະໜອງເລືອດທີ່ປອດໄພໃຫ້ພຽງພໍໃນແຕ່ລະວັນ. ພັດທະນາ ແລະ ຂະຫຍາຍຜະລິດຕະພັນການທ່ອງທ່ຽວ ໂດຍເນັ້ນໃສ່ຈຸດພິເສດແລະຊັບພະຍາກອນ ທີ່ປະເທດອື່ນມີໜ້ອຍ ເຊັ່ນ: ການທ່ອງທ່ຽວແບບລະບົບນິເວດ, ຊຸມຊົນມີສ່ວນຮ່ວມ; ນຳໃຊ້ມໍລະດົກວັດທະນະທຳ, ກິດຈະກຳກິລາ, ງານຕະຫຼາດນັດ, ບຸນປະເພນີ, ທຳມະຊາດແລະປະຫວັດສາດ. ຊຸກຍູ້ຜະລິດຕະພັນພາຍໃນໃຫ້ຫຼາຍຂຶ້ນ, ການບໍລິການໃຫ້ວ່ອງໄວທັນສະໄໝແລະໂຄສະນາຜ່ານສື່ອອນລາຍໃຫ້ກວ້າງຂວາງ. ແກ້ໄຂການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກຕິດພັນກັບການກໍ່ສ້າງຮາກຖານການເມືອງແລະວຽກງານ 3 ສ້າງ ໃຫ້ແຂງແຮງຕາມຈຸດສຸມລັດຖະບານແລະທ້ອງຖິ່ນ; ຍູ້ແຮງການຜັນຂະຫຍາຍເນື້ອໃນຈິດໃຈ ແລະ ບັນດາໜ້າວຽກຈຸດສຸມຂອງວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມພາລະບົດບາດ, ໜ້າທີ່ ຂອງແຕ່ລະຂະແໜງການຂອງພາກລັດ.

ນອກນັ້ນ, ຍັງໄດ້ລົງຊຸກຍູ້ວຽກງານຂົງເຂດສັງຄົມ ຢູ່ຄະນະຄຸ້ມຄອງເຂດເສດຖະກິດພິເສດ 3 ຫຼ່ຽມຄຳ, ແຂວງບໍ່ແກ້ວ.

# ຫາລືການລົງທຶນຢ່າງມີຄວາມຮັບຜິດຊອບ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ດິນຟ້າອາກາດ



(ສພຊ) - ລະຫວ່າງວັນທີ 25-26 ສິງຫາ 2026, ທ່ານ ນາງ ແສງມະນີ ຢາທໍ່ຕູ້ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ປະຈຳການກຳມາທິການເສດຖະກິດ ແລະ ການເງິນ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືຂອງລັດຖະສະພາພາກພື້ນກ່ຽວກັບການລົງທຶນຢ່າງມີຄວາມຮັບຜິດຊອບ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ດິນຟ້າອາກາດ, ທີ່ນະຄອນຫຼວງພະນົມເປັນ, ລາຊະອານາຈັກກຳປູເຈຍ; ກອງປະຊຸມຄັ້ງນີ້, ຈັດຂຶ້ນພາຍໃຕ້ການຮ່ວມມືລະຫວ່າງ ກອງເລຂາສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA), ອົງການອາຫານ ແລະ ກະສິກຳແຫ່ງສະຫະປະຊາຊາດ (FAO) ໂດຍການເປັນເຈົ້າພາບຂອງສະພາແຫ່ງຊາດແຫ່ງ ລາຊະອານາຈັກກຳປູເຈຍ ເຊິ່ງມີຄະນະຜູ້ແທນຈາກສະມາຊິກ ແລະ ລັດຖະສະພາສັງເກດການໄອປາ 5 ປະເທດ (ລາວ, ຫວຽດນາມ, ຟີລິບປິນ, ກຳປູເຈຍ ແລະ ຕີມໍ ແລັດສະເຕ), ກອງເລຂາໄອປາ, ກອງເລຂາອາຊຽນ, ກະຊວງທີ່ກ່ຽວຂ້ອງຂອງກຳປູເຈຍ, ສະຖານທູດປະເທດຕ່າງໆແລະອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ທີ່ປະຈຳຢູ່ກຳປູເຈຍ ເຂົ້າຮ່ວມຫຼາຍກວ່າ 70 ທ່ານ.

ກອງປະຊຸມໄດ້ຮັບກຽດເຂົ້າຮ່ວມກ່າວເປີດ ໂດຍທ່ານ ກິດຕິເສດຖາບັນດິດ ຈິມ ຢຽບ ຮອງປະທານສະພາແຫ່ງຊາດກຳປູເຈຍ ຜູ້ທີ 1. ຫຼັງຈາກນັ້ນ, ຄະນະຜູ້ແທນໄດ້ຮ່ວມກັນປຶກສາຫາລື ແລະ ແລກປ່ຽນກັນ ພາຍໃຕ້ 4 ຫົວຂໍ້ສຳຄັນຄື: 1) ລະບົບອາຫານທີ່ທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ ແລະ ການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານກະສິກຳ: ການຊຸກຍູ້ວາລະການຈັດຕັ້ງປະຕິບັດຄຳແນະນຳຂອງອາຊຽນ ວ່າດ້ວຍການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນຂະແໜງການກະສິກຳ, ອາຫານ ແລະ ປ່າໄມ້ (ASEAN RAI); 2) ການສົ່ງເສີມ ASEAN RAI ສຳລັບຄວາມໝັ້ນຄົງທາງດ້ານສະບຽງອາຫານ: ການສຳຫຼວດຂະໜາດເສດຖະກິດຂອງການລົງທຶນທີ່ມີຄວາມຮັບຜິດຊອບ; 3) ການເສີມສ້າງການຈັດຕັ້ງປະຕິບັດຂອງລັດຖະສະພາ ແລະການຮ່ວມມືກັບຫຼາຍພາກສ່ວນ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ດິນຟ້າອາກາດ: ການສົ່ງເສີມວາລະ ASEAN RAI; ແລະ 4) ການປຶກສາຫາລືໄປສູ່ການຈັດຕັ້ງປະຕິບັດ: ບົດບາດຂອງສະມາຊິກລັດຖະສະພາໃນຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມເຂັ້ມແຂງຕໍ່ການປ່ຽນແປງຂອງດິນຟ້າອາກາດ ແລະ ການລົງທຶນຢ່າງມີຄວາມຮັບຜິດຊອບ.

ໃນກອງປະຊຸມປຶກສາຫາລື, ທ່ານ ນາງ ແສງມະນີ ຢາທໍ່ຕູ້ ຫົວໜ້າຄະນະຜູ້ແທນລາວ ໄດ້ມີຄຳເຫັນແລກປ່ຽນ ໂດຍຍົກໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງສະພາແຫ່ງຊາດ ແລະ ລັດຖະບານ ແຫ່ງ ສປປລາວ ຕາມແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ໂດຍສະເພາະກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ຮ່າງກົດໝາຍວ່າດ້ວຍອາກອນສິ່ງແວດລ້ອມ (ສ້າງໃໝ່) ແລະ ຈະປັບປຸງກົດໝາຍທີ່ກ່ຽວຂ້ອງ ເພື່ອສົ່ງເສີມໃຫ້ຂະແໜງການໄດ້ຮັບນະໂຍບາຍສົ່ງເສີມ, ປະກອບສ່ວນຕໍ່ລະບົບອາຫານທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ; ການຊຸກຍູ້ການຈັດຕັ້ງປະຕິບັດດຳລັດວ່າດ້ວຍສິນເຊື່ອກາກບອນ ແລະ ການຮ່ວມມືຂອງລັດຖະບານລາວ ກັບອົງການອາຫານ ແລະ ກະສິກຳ, ທະນາຄານພັດທະນາອາຊີ (ADB) ແລະ ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ໃນການເປີດໂຕແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການຫັນໄປສູ່ລະບົບອາຫານທີ່ຍືນຍົງ 2025-2030.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປໃນບັ້ນຍາກາດທີ່ມີຄວາມເປັນເອກະພາບກັນ, ບັນດາຄະນະຜູ້ແທນໄດ້ເອົາໃຈໃສ່ປະກອບຄຳຄິດຄຳເຫັນແລະແລກປ່ຽນກັນຢ່າງສ້າງສັນ ໃນການຕິດຕາມກວດກາ, ຊຸກຍູ້ ແລະ ສົ່ງເສີມການຮ່ວມມື ເພື່ອຈັດຕັ້ງປະຕິບັດຄຳແນະນຳຂອງອາຊຽນ ວ່າດ້ວຍການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນຂະແໜງການກະສິກຳ, ອາຫານ ແລະ ປ່າໄມ້ ເພື່ອຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ດິນຟ້າອາກາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນໃນຕໍ່ໜ້າ.

# ມອບລົດຖີບໃຫ້ເມືອງຫົວເມືອງ



(ສພຂ) - ວັນທີ 7 ກໍລະກົດຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ມອບ-ຮັບ ລົດຖີບ 9 ຄັນໃຫ້ແກ່ ເມືອງຫົວເມືອງ; ຕາງໜ້າກ່າວມອບຂອງທ່ານ ຄຳພຸຍ ເຜັດສົມພອນ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ແລະ ຕາງໜ້າຮັບໂດຍທ່ານ ສົນ ອິນທະວົງ ວິຊາການຫ້ອງວ່າການເມືອງຫົວເມືອງ ເພື່ອນຳໄປມອບໃຫ້ເມືອງ ໄປມອບຕໍ່ໃຫ້ນັກຮຽນທີ່ຮຽນດີ, ຮຽນເກັ່ງ, ທຸກຍາກ ຢູ່ແຕ່ລະໂຮງຮຽນທີ່ມີເປົ້າໝາຍ ທັງນີ້ກໍ່ເປັນການກະຕຸກຊຸກຍູ້ຂະບວນການຮຽນ-ການສອນຂອງນ້ອງນັກຮຽນໃຫ້ນັບມື້ດີຂຶ້ນ.

ພ້ອມນັ້ນ, ວັນທີ 9 ກໍລະກົດຜ່ານຍັງໄດ້ມອບ-ຮັບລົດຖີບ 10 ຄັນໃຫ້ແກ່ ເມືອງຊຽງຄໍ້ ຕາງໜ້າກ່າວມອບທ່ານ ຄຳພຸຍ ເຜັດສົມພອນ ແລະ ກ່າວຮັບໂດຍທ່ານ ໄພທອນ ບຸນໄມ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຊຽງຄໍ້ ຕື່ມອີກ

# ຊຸກຍູ້ວຽກງານວັດທະນະທຳ-ສັງຄົມ



(ສພຂ) - ວັນທີ 7 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງຫົວພັນ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ສະພາປະຊາຊົນແຂວງ (ສພຂ) ຮ່ວມກັບພະແນກວັດທະນະທຳ ແລະການທ່ອງທ່ຽວແຂວງ ໄດ້ຈັດກອງປະຊຸມປຶກສາຫາລື ວຽກງານຂົງເຂດວັດທະນາທຳ ແລະ ທ່ອງທ່ຽວ ໂດຍການເປັນປະທານຮ່ວມຂອງທ່ານ ສຸກມີໄຊ ສິງບຸນເຮືອງ ກຳມະການຄະນະປະຈຳ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ແລະ ທ່ານ ພູວັນ ເຜັດມີໄຊ ຮອງຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ; ເຂົ້າຮ່ວມມີບັນດາຮອງປະທານຄະນະກຳມະການ; ຮອງຫົວໜ້າພະແນກ; ຫົວໜ້າ-ຮອງຫົວໜ້າຂະແໜງການ ຕະຫຼອດຮອດວິຊາການທັງສອງພາກສ່ວນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານ ການຈັດຕັ້ງປະຕິບັດວຽກງານຂົງເຂດວັດທະນະທຳ ແລະ ທ່ອງທ່ຽວ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ 2026 ເປັນຕົ້ນການສ້າງຄອບຄົວວັດທະນະທຳ, ບ້ານວັດທະນະທຳ, ກົມກອງວັດທະນະທຳ ແລະ ການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ; ຂໍ້ຕົກລົງ ຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ບຸນປະເພນີ ຢູ່ແຂວງຫົວພັນ ໃນໄລຍະຜ່ານມາ ຈາກຮອງຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ ເຊິ່ງຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ການຈັດຕັ້ງປະຕິບັດໃນໄລຍະຜ່ານມາ. ທັງນີ້ກໍ່ເພື່ອເປັນການປຶກສາຫາລື, ຄົ້ນຄວ້າ ແລະ ຕິດຕາມ, ກວດກາ, ຊຸກຍູ້ບັນດາຂະແໜງການທີ່ກ່ຽວຂ້ອງທີ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງແລກປ່ຽນຄວາມຄິດຄຳເຫັນ ເຊິ່ງກັນ ແລະ ກັນ ຢ່າງກົງໄປກົງມາ ໂດຍເຫັນດີໃຫ້ປັບປຸງບາງໝວດ, ບາງມາດຕາ ທີ່ເຫັນວ່າບໍ່ທັນສອດຄ່ອງ ແລະເໝາະສົມກັບສະພາບຕົວຈິງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ທຽບໃສ່ການດຳລົງຊີວິດໃນປັດຈຸບັນ ເພື່ອຄວາມເປັນເອກະພາບຕໍ່ກັບການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ຕອນທ້າຍ, ຍັງໄດ້ພ້ອມກັນມີຄຳເຫັນເໜັ້ນໜັກໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ ຢ່າງເຂັ້ມງວດ, ເພີ່ມທະວີໃນການປະສານງານ ໃຫ້ໄປໃນທິດທາງດຽວກັນ ແລະ ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດແລະຖືກຕ້ອງຕາມຂັ້ນຕອນ ກົດໝາຍ ແລະ ລະບຽບການທີ່ວາງໄວ້.




**ຄປຈສພຊ...**

(ຕໍ່ຈາກໜ້າ 1)

(02/9/1945-02/9/2026) ໂດຍການຕ້ອນຮັບຂອງສະຫາຍ ຫງວຽນ ມິ່ງເຕິ່ມ (Nguyễn Minh Tâm) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງສສ.ຫວຽດນາມປະຈຳ ສປປລາວ.

ສະຫາຍ ມອນໄຊ ລາວມົວຊື່ງ ໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍແລະຕີລາຄາສູງຕໍ່ພັກ-ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ຍາດໄດ້ຜົນງານອັນໃຫຍ່ຫຼວງຕະຫຼອດໄລຍະ 81 ປີຜ່ານມາ ແລະ ຕີລາຄາສູງຕໍ່ສະຫາຍ ຫງວຽນ ມິ່ງ ເຕິ່ມ ທີ່ເປັນຂົວຕໍ່ສຳຄັນໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮອບມືຮອບດ້ານແລະຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ ໂດຍສະເພາະໃນຂົງເຂດວຽກງານນິຕິບັນຍັດຂອງສອງປະເທດ ທີ່ໄດ້ມີການພົວພັນຮ່ວມມືກັນລົງເລິກ ແລະ ມີໝາກຜົນດີຂຶ້ນເປັນກ້າວໆ; ພ້ອມນີ້, ຍັງໄດ້ຖືເອົາໂອກາດດັ່ງກ່າວ ອວຍພອນໃຫ້ທ່ານທູດ ພ້ອມດ້ວຍພະນັກງານພາຍໃນສະຖານທູດ ຈົ່ງມີສຸຂະພາບແຂງແຮງ, ມີພະລານາໄມສົມບູນ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ສະຫາຍຫງວຽນມິ່ງເຕິ່ມ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຂອບໃຈຢ່າງສູງ ຕໍ່ຄະນະນຳຂອງສະພາແຫ່ງຊາດ ທີ່ມາອວຍພອນເນື່ອງໃນໂອກາດວັນຊາດຫວຽດນາມ ຄົບຮອບ 81 ປີ ເຊິ່ງສະແດງເຖິງການເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮອບມືຮອບດ້ານແລະຫຸ້ນສ່ວນຍຸດທະສາດ ຫວຽດນາມ-ລາວ ທີ່ມີມູນເຊື້ອມາແຕ່ດົນນານແລ້ວນັ້ນ ໃຫ້ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ; ພ້ອມດຽວກັນ, ກໍອວຍພອນໃຫ້ຄະນະ ຈົ່ງມີສຸຂະພາບເຂັ້ມແຂງ, ມີຜົນສຳເລັດໃນໜ້າທີ່ວຽກງານທຸກປະການ ແລະ ອວຍພອນໃຫ້ສາຍພົວພັນຮ່ວມມືລະຫວ່າງ ຫວຽດນາມ-ລາວ, ລາວ-ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນຊົ່ວກາລະນານ.

# ປະທານ ຄວສຊ ເຄື່ອນໄຫວຊຸກຍູ້ວຽກງານສາທາລະນາສຸກຢູ່ລຽບນ້ຳ



(ສພຂ) - ວັນທີ 8-10 ກໍລະກົດຜ່ານມາ, ທ່ານ ສຸກມີໄຊ ສິງບຸນເຮືອງ ກຳມະການຄະນະປະຈຳ, ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະຊົນເຜົ່າ (ຄວສຊ) ຮ່ວມກັບທີມງານຂອງພະແນກສາທາລະນະສຸກແຂວງຫົວພັນ ໄດ້ລົງເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານສາທາລະນາສຸກຮອບດ້ານ ປະຈຳ 6 ເດືອນຕົ້ນປີ 2026 ຢູ່ສາມເມືອງຄື: ເມືອແອດ, ຊຽງຄໍ້ ແລະ ສົບເບົາ.

ໃນການເຄື່ອນໄຫວເຮັດວຽກແຕ່ລະຈຸດໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ ການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສາທາລະນະສຸກ ຈາກຜູ້ຕາງໜ້າຫ້ອງການສາທາລະນະສຸກເມືອງ; ຈາກນັ້ນ, ທ່ານ ສຸກມີໄຊ ສິງບຸນເຮືອງ ໄດ້ສະແດງຄວາມຍ້ອງຍໍຊົມເຊີມຕໍ່ຜົນງານ 6 ເດືອນຕົ້ນປີ ທີ່ຂະແໜງການກ່ຽວຂ້ອງຍາດມາໄດ້ ທັງເນັ້ນໜັກໃຫ້ພະນັກງານຫ້ອງການສາທາລະນະສຸກແຕ່ລະເມືອງ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍ ບັນຫາຕົວຊີ້ວັດທີ່ເຫັນວ່າຍັງມີຄວາມສ່ຽງຈະບໍ່ບັນລຸ, ບັນຫາຈັນຍາບັນຈັນຍາທຳຂອງແພດໝໍ ແລະ ປະຕິບັດໃຫ້ໄດ້ 5 ດີ 1 ພໍໃຈ ເພື່ອຮັບປະກັນໃຫ້ແກ່ການບໍລິການປະຊາຊົນໃຫ້ດີຂຶ້ນເລື້ອຍໆ.

**(ສພຂ ຫົວພັນ)**



## ນາງ ສູນທອນ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 21 ສິງຫາ 2026 ໄດ້ມີພິທີປະກາດກົງຈັກທີ່ຄະນະປະຈໍາສະພາແຫ່ງຊາດສ້າງຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນປະຈໍາເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໂດຍການເປັນປະທານຂອງທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮັກສາການແທນປະທານຄະນະປະຈໍາສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານບຸນໂຈມ ອຸບົນປະເສີດ ກໍາມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສະຫວັນນະເຂດ; ທ່ານ ນາງ ດາວອນ ໄຊຊູລຽນ ຮອງເລຂາພັກແຂວງ, ປະທານຄະນະກໍາມະການປົກຄອງແຂວງ; ບັນດາທ່ານຄະນະປະຈໍາພັກແຂວງ, ກໍາມະການພັກແຂວງ, ຄະນະປະຈໍາສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈໍາເມືອງອ້ອມຂ້າງ, ຜູ້ຕາງໜ້າພະແນກການ ແລະ ອົງການອ້ອມຂ້າງແຂວງ, ຄະນະຫ້ອງວ່າການ ແລະ ພະນັກງານເສນາທິການຂອງສະພາປະຊາຊົນແຂວງ ລວມຈໍານວນ 100 ກວ່າທ່ານ.

ໃນພິທີ, ທ່ານ ບຸນໂຈມອຸບົນປະເສີດໄດ້ລາຍງານສະພາບໂດຍຫຍໍ້ໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ2026; ຈາກນັ້ນ, ທ່ານ ວຽງແກ້ວ ວັນນະຈັກ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດໄດ້ອ່ານມະຕິຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 192/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 13 ໂດຍມີທ່ານບຸນໂຈມອຸບົນປະເສີດກໍາມະການສູນກາງພັກ, ເລຂາພັກແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ແລະ ທ່ານ ພູລໍາພອນ ສີຫາວົງຄະນະປະຈໍາພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 13ແຂວງສະຫວັນນະເຂດ.



ໂອກາດເຂົ້າຮ່ວມພິທີປະກາດກົງຈັກການຈັດຕັ້ງດັ່ງກ່າວ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ຜົນງານແລະຜົນສໍາເລັດຮອບດ້ານຂອງແຂວງພາຍໃຕ້ການນໍາພາ-ຊີ້ນໍາຂອງຄະນະພັກ, ອໍານາດການປົກຄອງແຂວງທັງສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງເປັນຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 13 ແລະ ສະແດງຄວາມເຊື່ອໝັ້ນວ່າ ຈະນໍາພາ-ຊີ້ນໍາວຽກງານຄະນະ ສສຊ ປະຈໍາເຂດເລືອກຕັ້ງຂອງຕົນ ເຮັດສໍາເລັດຕາມພາລະບົດບາດການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງຜູ້ມີສິດເລືອກຕັ້ງ; ທ່ານຮັກສາການແທນປະທານສະພາແຫ່ງຊາດ ໄດ້ສະເໜີໃຫ້ອໍານາດການປົກຄອງແຂວງ ກໍຄືອໍານາດການປົກຄອງທຸກຂັ້ນ, ອົງການຈັດຕັ້ງຂັ້ນແຂວງ ຈົ່ງໄດ້ໃຫ້ການຮ່ວມມື, ສະໜັບສະໜູນການເຄື່ອນໄຫວຂອງສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງກໍຄືສະມາຊິກສະພາປະຊາຊົນແຂວງ ດ້ວຍການສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງ ສສຊ-ສສຂ ເພື່ອເຮັດສໍາເລັດໜ້າທີ່ໃນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນໃນເຂດເລືອກຕັ້ງຂອງຕົນ ໃຫ້ໄດ້ຢ່າງເຕັມສ່ວນ.

ໃນໂອກາດລົງເຄື່ອນໄຫວຄັ້ງນີ້, ທ່ານ ນາງ ສູນທອນ ໄຊຍະຈັກ ແລະ ຄະນະສສຊຍັງໄດ້ເຄື່ອນໄຫວ ແລະ ຢ້ຽມຢາມປະຊາຊົນທີ່ໄດ້ຮັບຜົນກະທົບຈາກອຸທົກກະໄພ ຢູ່ບ້ານເວີນທົ່ງຄໍາ ແລະ ບ້ານກອຍ ເມືອງພິນ ພ້ອມທັງມອບເຄື່ອງອຸປະໂພກ ແລະ ບໍລິໂພກຈໍານວນໜຶ່ງ ເພື່ອບັນເທົາທຸກແກ່ປະຊາຊົນ.

ວັນທີ 22 ສິງຫາ, ທ່ານຮັກສາການແທນປະທານສະພາແຫ່ງຊາດ ໄດ້ເຄື່ອນໄຫວຢ້ຽມຢາມແລະມອບເຄື່ອງບັນເທົາທຸກປະຊາຊົນທີ່ປະສົບອຸທົກກະໄພຢູ່ບ້ານນາພອກເທິງ ເມືອງເຊບັ້ງໄຟແລະຕາແສງຕານເທິງເມືອງໜອງບົກແຂວງຄໍາມ່ວນ ອີກດ້ວຍ.

## ກວດກາ...

(ຕໍ່ຈາກໜ້າ 1)



ບູນ ສຸກອາລຸນ ປະທານກໍາມາທິການເສດຖະກິດ ແລະ ການເງິນພ້ອມດ້ວຍບັນດາທ່ານຮອງປະທານກໍາມາທິການສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງໂຍທາທິການແລະຂົນສົ່ງ(ຍທຂ), ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈໍາສະພາແຫ່ງຊາດ (ຄປຈສພຊ) ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ທຸມມາລີ ວົງພະຈັນ ກ່າວວ່າ: ກອງປະຊຸມຄັ້ງນີ້ ຈັດຂຶ້ນເພື່ອຮັບປະກັນໃຫ້ການປັບປຸງເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການຈະລາຈອນທາງບົກມີຄວາມຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ ເນື່ອງຈາກຮ່າງກົດໝາຍສະບັບນີ້ ຕິດພັນໂດຍກົງກັບການດໍາລົງຊີວິດຂອງພວກເຮົາໃນການນໍາໃຊ້ຍານພາຫະນະທາງບົກຕາມທ້ອງຖະໜົນເຊິ່ງເຫັນວ່າໃນແຕ່ລະປີ ມີອຸປະຕິເຫດເກີດຈາກການນໍາໃຊ້ຍານພາຫະນະທາງບົກເປັນຈໍານວນຫຼວງຫຼາຍ ເຊິ່ງໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງພົນລະເມືອງຈໍານວນບໍ່ໜ້ອຍຈົນກາຍເປັນປາກົດການຫຍໍ້ທໍ້ໜຶ່ງໃນສັງຄົມ ທີ່ຈະຕ້ອງໄດ້ຮັບການແກ້ໄຂ.

ປະທານ ກໝຍທ ກ່າວອີກວ່າ ການປັບປຸງເທື່ອນີ້ ເພື່ອແກ້ໄຂບັນຫາຈໍານວນໜຶ່ງເປັນຕົ້ນ:ການແບ່ງຂັ້ນຄຸ້ມຄອງລະຫວ່າງຂະແໜງການຍທຂກັບຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນ ລະຫວ່າງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນໃຫ້ມີຄວາມຄົບຖ້ວນ, ຈະແຈ້ງ ແລະ ຊັດເຈນ ລວມທັງການກໍານົດສິດ ແລະ ໜ້າທີ່ຂອງຕໍາຫຼວດຈະລາຈອນ, ຕໍາຫຼວດທາງຫຼວງ ແລະເຈົ້າໜ້າທີ່ຂົນສົ່ງທາງບົກ ເພາະວ່າເປັນຜູ້ຈັດຕັ້ງປະຕິບັດຕົວຈິງ; ໃນໄລຍະຜ່ານມາ ການຈັດຕັ້ງປະຕິບັດຕົວຈິງໃນການຄຸ້ມຄອງການນໍາໃຊ້ຍານພາຫະນະທາງບົກ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມທ້ອງຖະໜົນ ຍັງມີຄວາມຫຍຸ້ງຍາກສັບສົນ ເນື່ອງຈາກຫຼາຍສາເຫດ ໃນນັ້ນ, ຍ້ອນວ່າການກໍານົດເນື້ອໃນຂອງກົດໝາຍຍັງບໍ່ທັນຮັດກຸມ ຫຼື ອາດເປັນຍ້ອນພາກການຈັດຕັ້ງປະຕິບັດ; ການຕິດຕາມກວດກາແລະການບັງຄັບໃຊ້ກົດໝາຍໃນໄລຍະຜ່ານມາ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ ເຊິ່ງເຮັດໃຫ້ມີການນໍາໃຊ້ຍານພາຫະນະທາງບົກບໍ່ໄດ້ມາດຕະຖານ, ບໍ່ມີຄວາມປອດໄພ, ຂັບຂີ່ຍານພາຫະນະໃນເວລາທີ່ມີປະລິມານທາດເຫຼົ້າໃນຮ່າງກາຍແລະການລະເມີດກົດຈະລາຈອນຈຶ່ງເຮັດໃຫ້ການເກີດອຸປະຕິເຫດຕາມທ້ອງຖະໜົນເປັນຈໍານວນຫຼວງຫຼາຍໃນແຕ່ລະປີ.

ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າປະກອບຄໍາເຫັນຕໍ່ເນື້ອໃນຮ່າງກົດໝາຍທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການຕົນ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດ.

ພາຍຫຼັງສໍາເລັດກອງປະຊຸມ, ຄະນະຮັບຜິດຊອບຈະໄດ້ລາຍງານຜົນສໍາເລັດຂອງການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ ຕໍ່ກອງປະຊຸມ ຄປຈ ສພຊ ປະຈໍາເດືອນກັນຍາ ກ່ອນນໍາເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີXທີ່ຈະໄດ້ໄຂຂຶ້ນໃນທ້າຍປີນີ້.

**(ນາງອານິຕາມ່ວນສະຫວັດ)**



## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ລັດຖະມົນຕີ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ ແລະ ຜູ້ຕາງໜ້າບັນດາກະຊວງ-ອົງການ ເຂົ້າຮ່ວມແບບເຊື່ອມໜ້າ; ບັນດາປະທານ, ຮອງປະທານ, ຜູ້ຕາງໜ້າຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກ ເພື່ອຮັບຟັງ ແລະ ປະກອບຄຳເຫັນ ຕໍ່ການລາຍງານສະພາບພົ້ນເດັ່ນປະຈຳເດືອນສິງຫາ ແລະ ທິດທາງແຜນວຽກຈຸດສຸມປະຈຳເດືອນກັນຍາ ເຊິ່ງກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາ ຕໍ່ບັນດາຫົວຂໍ້ທີ່ສຳຄັນຄື:

ວາລະທີ 1: ສະພາບພົ້ນເດັ່ນ ແລະ ວຽກງານຈຸດສຸມຮີບດ່ວນຈຳນວນໜຶ່ງຄື: 1) ການປະຕິບັດວຽກຈຸດສຸມພົ້ນເດັ່ນປະຈຳເດືອນສິງຫາແລະທິດທາງແຜນການປະຈຳເດືອນກັນຍາຂອງລັດຖະບານ, 2) ສະພາບການຄຸ້ມຄອງລາຄາສິນຄ້າ ແລະ ການແກ້ໄຂບັນຫານ້ຳມັນເຊື້ອໄຟ, 3) ສະພາບໄພພິບັດທີ່ເກີດຂຶ້ນແລະແຜນການກຽມຄວາມພ້ອມຮັບມືໃນທ້າຍປີ 2026; ໃນນັ້ນ:

ຕໍ່ກັບສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນສິງຫາຂອງລັດຖະບານ ເຫັນວ່າ: ທົ່ວປະເທດສືບຕໍ່ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ໄດ້ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງຢູ່ບັນດາຮາກຖານແລະຈຸດລໍ່ແຫຼມ; ໄດ້ເອົາໃຈໃສ່ສະກັດກັ້ນ ແລະ ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນ ເກັບກູ້ອາວຸດ, ວັດຖຸລະເບີດ, ແກ້ງສະແກນເມີ, ການລັກລອບຄົນເຂົ້າ-ອອກເມືອງ, ການນຳເຂົ້າ ແລະ ນຳໃຊ້ພາຫະນະບໍ່ຖືກຕ້ອງ, ອຸປະຕິເຫດຕາມທ້ອງຖະໜົນ; ມາຮອດປັດຈຸບັນ ສາມາດເກັບລາຍຮັບເຂົ້າງົບປະມານໄດ້ 72% ຂອງແຜນການປີ, ປະຕິບັດແຜນລາຍຈ່າຍງົບປະມານໄດ້ 48% ຂອງແຜນການປີ, ສາມາດຄວບຄຸມອັດຕາເງິນເຟີ້ ສະເລ່ຍຢູ່ໃນລະດັບ 7.6%; ໄດ້ເອົາໃຈໃສ່ສົ່ງເສີມການຜະລິດຮັບໃຊ້ພາຍໃນ ແລະ ເປັນສິນຄ້າ ເພື່ອທົດແທນການນຳເຂົ້າ, ທັງໄດ້ຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຕ່າງໆ ຢ່າງເປັນເຈົ້າການ. ນອກຈາກນັ້ນ, ການກໍ່ສ້າງ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ-ຂົວ, ວຽກງານປະກັນສັງຄົມ, ການພັດທະນາຫັນເປັນດິຈິຕອນ ແລະ ທັນສະໄໝ, ການສະໜອງນ້ຳມັນເຊື້ອໄຟ, ການສົ່ງເສີມນຳໃຊ້ລົດໄຟຟ້າ ແລະ ພະລັງງານສະອາດ, ການປັບປຸງຄຸນນະພາບການສຶກສາ, ການກະກຽມເປີດສົກຮຽນໃໝ່ ສົກຮຽນ 2026-2027, ການສ້າງຄອບຄົວວັດທະນະທຳ, ການປັບປຸງພື້ນຖານໂຄງລ່າງ ແລະ ການບໍລິການການທ່ອງທ່ຽວ, ການປ້ອງກັນພະຍາດຕາມລະດູການ, ການປັບປຸງການບໍລິການດ້ານສາທາລະນະສຸກ, ການຂະຫຍາຍຕາໜ່າງໄຟຟ້າຮັບໃຊ້ປະຊາຊົນ, ການເຄື່ອນໄຫວວຽກງານຕ່າງປະເທດ ແລະອື່ນໆລ້ວນແຕ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງຄືບໜ້າ; ພ້ອມດຽວກັນນັ້ນ, ລັດຖະບານໄດ້ເອົາໃຈໃສ່ຊີ້ນຳ ແລະ ຊ່ວຍເຫຼືອເບື້ອງຕົ້ນ ໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກໄພພິບັດນ້ຳຖ້ວມ-ນ້ຳໄຫຼຊຸ ຢູ່ 8 ແຂວງ ເຊິ່ງທ່ານນາຍົກລັດຖະມົນຕີ, ບັນດາທ່ານຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານຈຳນວນໜຶ່ງກໍໄດ້ລົງຕິດຕາມແກ້ໄຂ ແລະ ມອບການຊ່ວຍເຫຼືອໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຢູ່ພື້ນທີ່ຕົວຈິງໃນທ້ອງຖິ່ນຕ່າງໆ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍຍັງມີວຽກງານຈຳນວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂໃຫ້ມີປະສິດທິຜົນຫຼາຍກວ່າເກົ່າ ເປັນຕົ້ນ ບັນຫາສະແກນເມີ, ອຸປະຕິເຫດ, ການຄ້າຂາຍຢາເສບຕິດແລະອື່ນໆ ຍັງເກີດຂຶ້ນຈຳນວນບໍ່ໜ້ອຍ; ການຈັດຕັ້ງປະຕິບັດໂຄງການທີ່ເປັນບຸລິມະສິດຂອງລັດຖະບານ ຍັງມີຄວາມຄືບໜ້າຊ້າ; ການນຳເຂົ້າສິນຄ້າຟຸມເຟືອຍ ແລະ ສິນຄ້າທີ່ຜະລິດພາຍໃນໄດ້ແລ້ວ ແຕ່ຍັງບໍ່ມີທ່າອຽງຫຼຸດລົງ; ເອົາໃຈໃສ່ການປະຕິບັດນະໂຍບາຍນຳໃຊ້ລົດໄຟຟ້າ ແລະ ພະລັງງານສະອາດຢ່າງແຂງແຮງ; ການຈັດຕັ້ງປະຕິບັດວຽກງານ ແລະ ການແບ່ງຄວາມຮັບຜິດຊອບ ລະຫວ່າງເມືອງ, ຕາແສງ ແລະ ບ້ານ ໃຫ້ມີຄວາມຊັດເຈນ, ໂລ່ງລ່ຽນ ແລະບໍລິການຮັບໃຊ້ປະຊາຊົນຢ່າງທັນການ.



ວາລະທີ 2: ກອງປະຊຸມເຫັນດີດ້ານຫຼັກການ ຮັບຮອງເອົາຮ່າງນິຕິກຳຈຳນວນ 12 ສະບັບ (ມີຮ່າງກົດໝາຍປັບປຸງ 9 ສະບັບ) ຄື: 1) ຮ່າງກົດໝາຍວ່າດ້ວຍລັດຖະບານ, 2) ຮ່າງກົດໝາຍວ່າດ້ວຍຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, 3) ຮ່າງກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, 4) ຮ່າງກົດໝາຍວ່າດ້ວຍພົນລະເຮືອນ, 5) ຮ່າງກົດໝາຍວ່າດ້ວຍການປະກັນສຸຂະພາບ, 6) ຮ່າງກົດໝາຍວ່າດ້ວຍປະກັນສັງຄົມ, 7) ຮ່າງກົດໝາຍວ່າດ້ວຍການບິນພົນລະເຮືອນ, ຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງໄຊເບີ, 9) ຮ່າງກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ, 10) ຮ່າງຄຳສັ່ງວ່າດ້ວຍການປັບປຸງນະໂຍບາຍແລະເພີ່ມທະວີການຄຸ້ມຄອງການພັດທະນາແຮ່ທາດໃນໄລຍະໃໝ່, 11) ຮ່າງດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ (ປັບປຸງ), 12) ຮ່າງດຳລັດວ່າດ້ວຍນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ແຂວງຜົ້ງສາລີ ແລະ ແຂວງຫົວພັນ. ໃນນັ້ນ, ກອງປະຊຸມໄດ້ຊີ້ນຳໃຫ້ກະຊວງ-ອົງການ ສົມທົບກັບພາກສ່ວນກ່ຽວຂ້ອງ ນຳເອົາຮ່າງນິຕິກຳທີ່ຕິດພັນກັບຂະແໜງການຂອງຕົນ ໄປປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານ ໃຫ້ມີເນື້ອໃນຄົບຖ້ວນສົມບູນ, ລະອຽດຈະແຈ້ງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະປະສິດທິຜົນສູງ; ພາຍຫຼັງປັບປຸງບັນດາຮ່າງກົດໝາຍສຳເລັດແລ້ວ ຈຶ່ງສະເໜີນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງ, ສະເພາະຮ່າງກົດໝາຍວ່າດ້ວຍການປະກັນສຸຂະພາບ ແລະ ຮ່າງກົດໝາຍວ່າດ້ວຍປະກັນສັງຄົມ ມອບໃຫ້ຄະນະຮັບຜິດຊອບນຳໄປປັບປຸງຕື່ມ ເພື່ອຄົ້ນຄວ້າໂຮມເຂົ້າເປັນກົດໝາຍດຽວ ໃຫ້ສອດຄ່ອງກັບເງື່ອນໄຂສະພາບຕົວຈິງ, ສ່ວນຮ່າງດຳລັດວ່າດ້ວຍນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ແຂວງຜົ້ງສາລີ ແລະ ແຂວງຫົວພັນ ແມ່ນມອບໃຫ້ພາກສ່ວນກ່ຽວຂ້ອງກວດກາຄືນເພື່ອໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ພ້ອມທັງຈັດລຽງບຸລິມະສິດແຜນພັດທະນາພື້ນຖານໂຄງລ່າງຕ່າງໆ ຢ່າງມີຈຸດສຸມແລະສອດຄ່ອງກັບບັນດາທ່າແຮງບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ.

ສຳລັບທິດທາງແຜນວຽກຈຸດສຸມປະຈຳເດືອນກັນຍາ, ກອງປະຊຸມໄດ້ຊີ້ນຳຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງເອົາໃຈໃສ່ບັນດາວຽກງານສຳຄັນດັ່ງນີ້:

1. ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ແລະຮັກສາຄວາມສະຫງົບຕາມຊາຍແດນ; ສຸມໃສ່ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ເປັນຕົ້ນ ອາຊະຍາກຳລະບົບຄອມພິວເຕີ, ຢາເສບຕິດ, ການປຸ້ນຈີ້ຊິງຊັບ, ອຸປະຕິເຫດຕາມທ້ອງຖະໜົນ ໃຫ້ຫຼຸດລົງ.

2. ສືບຕໍ່ສຸມໃສ່ແກ້ໄຂແລະຊ່ວຍເຫຼືອບັນເທົາທຸກຈາກຜົນກະທົບນ້ຳຖ້ວມໃຫ້ກັບຄືນສູ່ປົກກະຕິໂດຍໄວ, ແກ້ໄຂເສັ້ນທາງທີ່ຖືກນ້ຳເຊາະເຈື່ອນ-ຕັດຂາດໃຫ້ສາມາດໄປມາໄດ້, ກະກຽມຄວາມພ້ອມຮອບດ້ານໃນການຮັບມືກັບໄພນ້ຳຖ້ວມທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ, ໃຫ້ຕິດຕາມຄວາມປອດໄພຂອງເຂື່ອນ ລວມທັງການຈັດການປະລິມານນ້ຳໃນເຂື່ອນໃຫ້ດີ.

3. ສຸມໃສ່ກະກຽມບັນດາເນື້ອໃນທີ່ຕິດພັນກັບຄວາມຮັບຜິດຊອບຂອງລັດຖະບານ ໃຫ້ພ້ອມ ແລະ ເຂົ້າຮ່ວມລາຍງານຕໍ່ກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກປະຈຳເດືອນສິງຫາ 2026.

4. ຮີບຮ້ອນຜັນຂະຫຍາຍມະຕິ 34/ສພຊ, ວ່າດ້ວຍການຮັບຮອງວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍສະເພາະການສ້າງແຜນງານ, ໂຄງການລະອຽດ ແລະ ແຜນງົບປະມານ ທີ່ຈະຈັດຕັ້ງປະຕິບັດບັນດາວຽກຈຸດສຸມຂອງວາລະແຫ່ງຊາດ ແລ້ວລາຍງານຕໍ່ກອງປະຊຸມລັດຖະບານໃນເດືອນກັນຍາ ຫຼື ເດືອນຕຸລາ ກ່ອນຈະນຳສະເໜີຜ່ານກອງປະຊຸມສະພາແຫ່ງຊາດ ໃນທ້າຍປີນີ້.

5. ໃຫ້ບັນດາກະຊວງ-ອົງການທຽບເທົ່າຮີບຮ້ອນແບ່ງພາລະບົດບາດ, ຄວາມຮັບຜິດຊອບລະຫວ່າງເມືອງ, ຕາແສງ ແລະ ບ້ານໃນການປະຕິບັດວຽກງານຂອງຂະແໜງການຕ່າງໆ ໃຫ້ສຳເລັດໃນເດືອນກັນຍານີ້.

6. ສຸມໃສ່ເກັບລາຍຮັບງົບປະມານຈາກແຫຼ່ງລາຍຮັບທີ່ມີແລ້ວໃຫ້ຄົບຖ້ວນ ແລະ ຂະຫຍາຍຖານອາກອນມູນຄ່າເພີ່ມໃຫ້ໄດ້ຫຼາຍ, ທັງສຸມໃສ່ການເຊື່ອມໂຍງຂໍ້ມູນການຈັດເກັບລາຍຮັບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ.

7. ສືບຕໍ່ຊຸກຍູ້ການຜະລິດເປັນສິນຄ້າເພື່ອສົ່ງອອກ ແລະ ທົດແທນການນຳເຂົ້າ ໄປຄຽງຄູ່ກັບການຈຳກັດການນຳເຂົ້າສິນຄ້າຟຸມເຟືອຍ ແລະ ສິນຄ້າທີ່ພາຍໃນສາມາດຜະລິດໄດ້ ໂດຍສະເພາະຊີ້ນໝູແຊ່ແຂງຈາກຕ່າງປະເທດ ທີ່ມີລາຄາຕໍ່າ ແລະ ບໍ່ຮັບປະກັນດ້ານຄຸນນະພາບ, ພ້ອມທັງໃຫ້ລົງຊ່ວຍແຂວງໄຊຍະບູລີ ໃນການຄວບຄຸມການລະບາດພະຍາດອະຫິວາໝູ.

8. ສືບຕໍ່ກະກຽມເປີດສົກຮຽນໃໝ່ ສົກປີ 2026-2027 ທຸກຊັ້ນຮຽນ ແລະ ເປີດມະຫາວິທະຍາໄລສ້າງຄູແຫ່ງຊາດ.

9. ສືບຕໍ່ຕິດຕາມ ຊຸກຍູ້, ກວດກາຂໍ້ມູນ ແລະ ຈັດແບ່ງງົບປະມານ ເພື່ອແກ້ໄຂນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດການປະຕິວັດຊາດປະຊາທິປະໄຕ.

10. ສືບຕໍ່ຕິດຕາມ, ເຝົ້າລະວັງ, ປ້ອງກັນ ແລະ ແກ້ໄຂ ພະຍາດລະບາດຕາມລະດູການ; ສືບຕໍ່ຄຸ້ມຄອງ ແລະ ກວດກາເຂັ້ມງວດຕໍ່ຄຸນນະພາບ, ມາດຕະຖານຂອງອາຫານ, ຢາ ແລະ ຜະລິດຕະພັນການແພດ ໃຫ້ໄດ້ມາດຕະຖານ ແລະ ຮັບປະກັນຄວາມປອດໄພ.

11. ສືບຕໍ່ກະກຽມຈັດງານສັບປະດາວັດທະນະທຳ ລາວ-ກຳປູເຈຍ, ລວມທັງລາຍການສະແດງ ເພື່ອຮັບໃຊ້ການເປັນເຈົ້າພາບຈັດກອງປະຊຸມທົບທວນສົນທິສັນຍາວ່າດ້ວຍການ

ອ່ານຕໍ່ໜ້າ 8



ສຸຂະສຸກສະບາຍຫາຍໂຣຄ

# ຄຸນປະໂຫຍດດີໆຂອງໝາກນາວ

ຮຽບຮຽງໂດຍ: ທອມສະນິດ



ໝາກນາວເປັນໝາກໄມ້ທີ່ມີລົດຊາດສົ້ມ ແລະ ອຸດົມໄປດ້ວຍວິຕາມິນ C, ສານຕ້ານອະນຸມູນອິດສະຫຼະ, ແລະ ເກືອແຮ່ທາດຕ່າງໆທີ່ມີປະໂຫຍດຕໍ່ຮ່າງກາຍ.

ສັບພະຄຸນ ແລະ ປະໂຫຍດທາງຢາ ມີດັ່ງນີ້:

**1. ເສີມສ້າງພູມຄຸ້ມກັນ:** ວິຕາມິນ C ສູງ ປ້ອງກັນ ແລະ ບັນເທົາອາການໄຂ້ຫວັດ, ໄອ, ແລະ ເຈັບຄໍ (ໂດຍນິຍົມປະສົມນ້ຳອຸ່ນ ແລະ ນ້ຳເຜິ້ງ).

**2. ຊ່ວຍໃນການຍ່ອຍອາຫານ:** ກົດໃນໝາກນາວຊ່ວຍກະຕຸ້ນການຫຼັ່ງນ້ຳຍ່ອຍ, ບັນເທົາອາການທ້ອງອືດ, ທ້ອງເຟີ້, ແລະ ຊ່ວຍໃຫ້ລະບົບຂັບຖ່າຍດີຂຶ້ນ.

**3. ບຳລຸງຜິວພັນ:** ສານຕ້ານອະນຸມູນອິດສະຫຼະຊ່ວຍຫຼຸດຜ່ອນຮອຍຫ່ຽວ, ຫຼຸດຄວາມໝອງຄ້ຳ, ແລະ ກະຕຸ້ນການສ້າງຄໍລາເຈນ ເຮັດໃຫ້ຜິວພັນກະຈ່າງໃສ.

**4. ຊ່ວຍຄວບຄຸມນ້ຳໜັກ:** ໃຍອາຫານ ໃນໝາກນາວຊ່ວຍໃຫ້ຮູ້ສຶກອີ່ມດົນຂຶ້ນ ແລະ ການດື່ມນ້ຳໝາກນາວອຸ່ນໆຕອນເຊົ້າຊ່ວຍກະຕຸ້ນການເຜົາຜານ.

**5. ຂັບສານພິດ (Detox):** ຊ່ວຍກະຕຸ້ນການເຮັດວຽກຂອງຕັບໃນການຂັບສານພິດອອກຈາກຮ່າງກາຍ ແລະ ຊ່ວຍຂັບປັດສະວະ.

**6. ສຸຂະພາບຊ່ອງປາກ:** ບັນເທົາອາການເລືອດອອກຕາມໄຣຟັນແລະຫຼຸດກິ່ນປາກ (ແຕ່ຄວນບ້ວນປາກຕາມຫຼັງ ເພາະກົດອາດກັດເຄືອບຟັນ).

**ຂໍ້ຄວນລະວັງ:**

ບໍ່ຄວນດື່ມນ້ຳໝາກນາວເຂັ້ມຂຸ້ນຕອນທ້ອງຫວ່າງ ໂດຍສະເພາະຜູ້ທີ່ມີບັນຫາໂລກກະເພາະຫຼືກົດໄຫຼຍ້ອນ ເພາະອາດເຮັດໃຫ້ແສບທ້ອງໄດ້.



ອາດ ກະວີລາວ

# ຍອມຮັບຜິດ ເພື່ອແກ້ໄຂຈຸດອ່ອນ

# ລູກທາດສາມປາງ

❄ ຄົນເຮົາມັກໝູ່ຍ້ອງ
ເກີນວ່າມີຄວາມສຸກ
ຈິດຜ່ອງໃສອີ່ມຍິ້ມ
ລົ້ນລື່ນຫຼົງເພີ່ນຍ້ອງ
ຍໍຍື່ນສັນລະເສີນ
ອີ່ມເຕັມເຂົາຍ້ອງ
ພໍໃຈໜ້າຊື່ນ
ສຸກລ້ຳມ່ວນໃຈ... ວ່າເດ!

❄ ໃຜກໍມັກແຕ່ຍ້ອງ
ເບີຍເບີກບານຍາມຍໍ
ສ່ວນຫຼາຍຄົນເຮົານັ້ນ
ປິດບັງຄວາມຊົ່ວໄວ້
ຄົນອື່ນຊົມເຊີຍ
ເມື່ອເຂົາຊູທ້າຍ
ສະເໜີກັນໂດຍດັ່ງ
ໄຂເວົ້າແຕ່ເລື່ອງດີ

❄ ຄັນຕຳນິເພີ່ນແຄ້ນ
ໃຈຈ່ອງເວນຊັງເຂົາ
ຄວາມຜິດຫຼາຍຝັງຊ້ອນ
ຈຸດອ່ອນອຳເລື່ອງດ້ອຍ ເຂົານຳຮອຍລ່ຳພ້ຳ
ເຄືອງຄັ່ງມະໂນໃນ
ໝູ່ຕິທືນຮ້າຍ
ຊັງໃນອີມເຊື່ອງ
ເຕືອນແລ້ວບໍ່ຮັບຟັງ

❄ ສັງບໍ່ຍອມໝູ່ເວົ້າ
ຄົນອື່ນເຂົາຕິຕຽນ
ຍັງສຽງແຂງຖຽງຖ້ອຍ
ຄວາມຜິດຕົນອັ່ງແອ້ນ
ຈຸດອ່ອນຂອງຕົນ
ວ່າເຮົາຜິດພັ້ງ
ເຄືອງກັນຄຽດຄັ່ງ
ແຖມຮ້າຍໃສ່ເຂົາ... ບໍ່ດີແລ້ວ!

❄ ຍອມຮັບຜິດແນ່ເຈົ້າ
ຍອມເພື່ອເປັນແນວທາງ
ເຈົ້າຢ່າຄອຍຄົນຍ້ອງ
ໃດຊິເຫັນບ່ອນເປື້ອນ
ເພື່ອນຳໄປປັບແກ້
ຍາມເພີ່ນມອງເຫັນ
ປ່ຽນແປງຄວາມດ້ອຍ
ສັນເສີນວ່າເດັ່ນ
ຄົນອື່ນແນມເບິ່ງໃຫ້
ຕົນນັ້ນບ່ອນເສຍ... ທ່ານເອີຍ!



ສັກສາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❄ **ວັນ**ທີ 1 ກັນຍາ ເປັນມື້ໄຂສົກຮຽນໃໝ່ທົ່ວປະເທດ ເປັນເທດການຄຶກຄື້ນ ສົກຮຽນໃໝໄຂພິທີເຕັມທີຍາມໄປ-ມາ ລົດຕິດຄາຄ້າງ ບ່າຄະໜົບຈົບບໍ່ມີບ່ອນອ້າງ ທາງຄົບລົດໄຕ່ ແຫຍ້ກັບໄປອັ່ງແໜ້ບ ຊາມຊາຮອດບ່ອນໝາຍ ລຽນເປັນແຖວຊ້າຍລ້າຍ ເກົ່າໃໝ່ຄັບງາມ ທາງສາມເລນຕັນເຕັມ ຄ່ອຍເຄື່ອນເໜັງຫຍັບຍ້າຍ ສ່ອນລົດຈັກກະເລີຍໄດ້ປີນໄປຕາມທາງຍ່າງ ເພາະທາງຫຼວງບໍ່ຄ່ອຍອ້າງ ພໍໃຫ້ໄຕ່ເດີນ ໜ່າຍເດ **ລົດຈັກລົ່ມ!**

❄ **ກົມ**ອຸຕຸນິຍົມ ແລະ ອຸທົກກະສາດ ອອກແຈ້ງການເຕືອນໄພນ້ຳຖ້ວມຫຼາຍເມືອງໃນທົ່ວປະເທດ ສາເຫດຍ້ອນນ້ຳຂອງ ແລະ ສາຂາເພີ່ມຂຶ້ນຫຼາຍ ຍັງຮອດເຂດອັນຕະລາຍ ເພິ່ນຈຶ່ງໄດ້ປະກາດແຈ້ງ ເຕືອນບອກລະວັງໄພ ໃຫ້ເບິ່ງແຍງອາຄານ ພ່າທັງສັດລ້ຽງ ພ້ອມທັງມີສະຕິຕັ້ງ ລະວັງໄພທຸກຢ່າງ ຮັກສາຂອງເຄື່ອງໃຊ້ ຊີວິພ້ອມຊັບສິນ **ພີ່ນ້ອງເອີຍ!**

ຊອບຍິ້ມ

# ພົ້ງລືງ

## ເລື່ອງ: ປ້າຍຈະລາຈອນ

**ທ້າວໄກ່:** ສ່ຽວ!!! ມຶງຈັບດີໆເດີ
**ທ້າວໄຂ່:** ເປັນຫຍັງສ່ຽວ!
**ທ້າວໄກ່:** ກູຊິບິດຄັນເລັ່ງຈ່ຳ
**ທ້າວໄຂ່:** ເຮີຍ... ມຶງບໍ່ຢ້ານຕຳຫຼວດໄລ່ຫວາ
**ທ້າວໄກ່:** ບໍ່...! ກູເຫັນປ້າຍຈະລາຈອນບອກວ່າ "ຂັບຊ້າໆ ອັນຕະລາຍ"
**ທ້າວໄຂ່:** ໂອ້ຍ... ບັກຫ່າມຶງ! ຈອດໃຫ້ກູລົງດຽວນີ້ ແລ້ວມຶງຈຶ່ງໄປ, ແລ້ວຖ້າມຶງໄປເຫັນປ້າຍ "ໂຄ້ງອັນຕະລາຍ" ມຶງບໍ່ຕ້ອງລ້ຽວ ມຶງໄປຊື່ເລີຍ!!!



### ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

"ໃຫ້ຄ່ອຍທ່າພຽນສ້າງ ສະເໝີແຕບແປງຊໍ່
ໃຫ້ສ້າງກໍ່ສືບໄວ້ ສະເໝີເຜິ້ງສືບຮັງ"

ລັດຖະສະພາຕ່າງປະເທດ

# ສະພາ Armenia ເລືອກ Ruben Rubbinyan ເປັນປະທານ

(Xinhua) - ວັນຈັນທີ 3 ສິງຫາ 2026, ສະພາແຫ່ງຊາດອາກເມນີ ໄດ້ເລືອກຕັ້ງຣູເບນຣູບິນຢານ ເປັນປະທານ ໃນການລົງຄະແນນສຽງປິດລັບ; ມີສະມາຊິກສະພາເຂົ້າຮ່ວມລົງຄະແນນ 91 ຄົນ ຈາກທັງໝົດ 105 ຄົນ, ຣູບິນຢານ ຜູ້ສະໝັກພຽງຄົນດຽວທີ່ໄດ້ຮັບການສະເໜີຊື່ໂດຍພັກສັນຍາພົນລະເຮືອນ (Civil Contract ມີ 64 ທີ່ນັ່ງ) ເຊິ່ງເປັນພັກລັດຖະບານ ໄດ້ຮັບເລືອກຕັ້ງດ້ວຍຄະແນນສຽງເຫັນດີ 63 ສຽງ ແລະ ຄັດຄ້ານ 28 ສຽງ.

ພັກພັນທະມິດອາກເມນີ (Armenia Alliance ມີ 12 ທີ່ນັ່ງ) ຝ່າຍຄ້ານ ໄດ້ຂວ້ຳບາດການລົງຄະແນນ, ຂະນະທີ່ພັກອາກເມນີທີ່ເຂັ້ມແຂງ (Strong Armenia ມີ 29 ທີ່ນັ່ງ) ເຊິ່ງເປັນຝ່າຍຄ້ານເຊັ່ນກັນ ກ່າວໄວ້ກ່ອນການລົງຄະແນນວ່າ ຈະຄັດຄ້ານການສະເໜີຊື່ຂອງ ຣູບິນຢານ.

ຣູບິນຢານ ອາຍຸ 36 ປີ ເຄີຍດຳລົງຕຳແໜ່ງຮອງປະທານສະພາແຫ່ງຊາດ, ເຂົາຍັງເຄີຍດຳລົງຕຳແໜ່ງທູດພິ ເສດຂອງອາກເມນີ ໃນການເຈລະຈາກັບຕວັກກີກ່ຽວກັບການຟື້ນຟູສາຍພົວພັນສອງຝ່າຍ.

ການເລືອກຕັ້ງຂອງ ຣູບິນຢານເກີດຂຶ້ນຫຼັງຈາກ ການເລືອກຕັ້ງສະພາແຫ່ງຊາດເມື່ອວັນທີ 7 ມິຖຸນາ ເຊິ່ງພັກສັນຍາພົນລະເຮືອນ ທີ່ເປັນພັກລັດຖະບານ ຍັງຮັກສາສຽງສ່ວນຫຼາຍໃນສະພາແຫ່ງຊາດໄວ້ໄດ້.




# ສິງກະໂປ ສະເໜີຮ່າງກົດໝາຍ ເພື່ອເສີມສ້າງອຳນາດຕ້ານ Scam




(Xinhua) - ວັນອັງຄານທີ 4 ສິງຫາ 2026, ກະຊວງພາຍໃນສິງກະໂປ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍມາດຕະການຕ້ານການຫຼອກລວງ (ມາດຕະການຕອບໂຕ້) ແລະ ເລື່ອງອື່ນໆ (Scams (Countermeasures) and Other Matters Bill) ເຂົ້າສູ່ການພິຈາລະນາຢ່າງເປັນທາງການໃນເບື້ອງຕົ້ນຕໍ່ລັດຖະສະພາ, ໂດຍສະເໜີການປັບປຸງເພື່ອເສີມສ້າງຂອບກົດໝາຍຂອງປະເທດໃນການຕ້ານການຫຼອກລວງ.

ກະຊວງກ່າວໃນຖະແຫຼງການວ່າຮ່າງກົດໝາຍນີ້ມີຈຸດປະສົງເພື່ອປັບປຸງກົດໝາຍວ່າດ້ວຍການປົກປ້ອງຈາກການຫຼອກລວງ, ກົດໝາຍວ່າດ້ວຍການປ້ອງກັນອັນຕະລາຍຈາກອາຊະຍາກຳທາງອອນລາຍ (Online Criminal Harms Act - OCHA) ແລະ ກົດໝາຍທີ່ກ່ຽວຂ້ອງ ເພື່ອເພີ່ມຂີດຄວາມສາມາດຂອງເຈົ້າໜ້າທີ່ໃນການກວດຈັບ, ຂັດຂວາງ ແລະ ສະກັດກັ້ນກິດຈະກຳການຫຼອກລວງ.

ການປ່ຽນແປງທີ່ສະເໜີໄດ້ແກ່: ບົດບັນຍັດເພື່ອອຳນວຍຄວາມສະດວກ ແລະ ປົກປ້ອງການແບ່ງປັນຂໍ້ມູນທີ່ກ່ຽວຂ້ອງກັບການສໍ້ໂກງ ລະຫວ່າງຕຳຫຼວດ ແລະ ຜູ້ໃຫ້ບໍລິການ, ຂະຫຍາຍຂອບການຈຳກັດສິ່ງອຳນວຍຄວາມສະດວກ ເພື່ອຈຳກັດບໍລິການທີ່ມີໃຫ້ແກ່ບຸກຄົນທີ່ເຊື່ອມໂຍງກັບການຫຼອກລວງ, ແນະນຳຄວາມຜິດໃໝ່ທີ່ແນໃສ່ການໃຊ້ບັນຊີອອນລາຍໃນທາງທີ່ຜິດ, ການເສີມສ້າງ OCHA ແລະ ການປັບປຸງປະສິດທິພາບຂອງການປະຕິບັດງານຂອງຕຳຫຼວດ.

ກະຊວງກ່າວວ່າ "ແຜນການຫຼອກລວງກຳລັງພັດທະນາຢ່າງໄວວາແລະກົດໝາຍຂອງສິງກະໂປຕ້ອງປັບຕົວໃຫ້ທັນ".

# ຄະນະລັດຖະມົນຕີ ສ.ເກົາຫຼີ ຜ່ານຮ່າງກົດໝາຍ ຕັດອຳນາດການສືບສວນຂອງໄອຍະການ



(Xinhua) - ວັນອັງຄານທີ 4 ສິງຫາ 2026 ຄະນະລັດຖະມົນຕີ ສ.ເກົາຫຼີ ໄດ້ຜ່ານຮ່າງກົດໝາຍ ເພື່ອຕັດອຳນາດການສືບສວນຂອງໄອຍະການ ເຊິ່ງເປັນການປະຕິຮູບຄັ້ງປະຫວັດສາດຂອງລະບົບຍຸຕິທຳທາງອາຍາຂອງປະເທດໃນຮອບກວ່າ 70 ປີ.

ການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ຮັບການອະນຸມັດໃນກອງປະຊຸມຄະນະລັດຖະມົນຕີ ເພື່ອຍົກເລີກຂອງໄອຍະການໃນການດຳເນີນການສືບສວນ ທັງທາງກົງ ແລະ ທາງອ້ອມ ໂດຍແຍກການສືບ ສວນ ແລະ ການດຳເນີນຄະດີ ອອກຈາກກັນຢ່າງສິ້ນເຊີງ.

ປະທານາທິບໍດີລີແຈມຽງ (Lee Jae Myung) ກ່າວໃນກອງປະຊຸມວ່າ ໄອຍະການໄດ້ໃຊ້ອຳນາດເກີນຂອບເຂດຢ່າງບໍ່ສົມສ່ວນໃນລະບົບຍຸຕິທຳທາງອາຍາທັງໝົດເປັນເວລາຫຼາຍທົດສະວັດ, ກວມເອົາຕັ້ງແຕ່ການສືບສວນ ໄປຈົນເຖິງການກ່າວຟ້ອງ ແລະ ການຂໍໝາຍຈັບ.

ພາຍໃຕ້ໂຄງສ້າງທີ່ຜິດປົກກະຕິ, ໄອຍະການໄດ້ໃຊ້ອຳນາດຢ່າງເດັດຂາດໃນທາງທີ່ຜິດ ເພື່ອປົກປິດ ຫຼື ມຸ່ງເປົ້າໄປທີ່ບາງຄະດີສະເພາະ, ລີຊີ້ໃຫ້ເຫັນ ພ້ອມທັງເນັ້ນໜັກວ່າການແຍກການສືບສວນ ແລະ ການດຳເນີນຄະດີ ແມ່ນບາດກ້າວທຳອິດສູ່ການເຮັດໃຫ້ລະບົບທີ່ຜິດປົກກະຕິນີ້ກັບສູ່ພາວະປົກກະຕິ.

ພາຍໃຕ້ກົດໝາຍສະບັບປັບປຸງທີ່ຈະມີຜົນບັງຄັບໃຊ້ໃນວັນທີ 2 ຕຸລາ, ການສືບສວນຄະດີອາຍາທັງໝົດຈະຖືກໂອນໄປໃຫ້ຕຳຫຼວດ, ສຳນັກງານສືບສວນການສໍ້ລາດບັງຫຼວງສຳລັບເຈົ້າໜ້າທີ່ລະດັບສູງ ແລະ ອົງການສືບ ສວນຄະດີອາຍາຮ້າຍແຮງທີ່ສ້າງຕັ້ງຂຶ້ນໃໝ່.

ໄອຍະການຈະຖືກຫ້າມບໍ່ໃຫ້ດຳເນີນການສືບສວນໃດໆ, ການສອບປາກຄຳຜູ້ຕ້ອງສົງໄສ ຫຼື ພະຍານໂດຍກົງ ແລະ ເກັບກຳຫຼັກຖານຢ່າງອິດສະຫຼະ. ແທນທີ່ຈະເປັນແນວນັ້ນ, ໄອຍະການຈະສາມາດຮ້ອງຂໍໃຫ້ຕຳຫຼວດ ດຳເນີນການສືບສວນເພີ່ມຕື່ມໄດ້ເທົ່ານັ້ນ ເຊິ່ງຕຳຫຼວດຈະຕ້ອງດຳເນີນການສືບສວນໃຫ້ສຳເລັດພາຍໃນໜຶ່ງເດືອນ ແລະ ແຈ້ງຜົນການສືບສວນໃຫ້ໄອຍະການຊາບ, ຫາກຈຳເປັນ, ຕຳຫຼວດສາມາດຂະຫຍາຍເວລາການສືບສວນໄດ້ອີກບໍ່ເກີນໜຶ່ງເດືອນ.



## ຄະນະ...

(ຕໍ່ຈາກໜ້າ 1)

ກອງປະຊຸມປະທານລັດຖະສະພາສາກົນ ຄັ້ງທີ 2 ທີ່ນະຄອນຫຼວງພະນົມເປັນ, ລາຊະອານາຈັກກຳປູເຈຍ.

ໃນການພົບປະກັນຄັ້ງນີ້, ທັງສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບແບບພິເສດລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດ ກໍຄືການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ລາວ-ຫວຽດນາມ, ພ້ອມທັງປຶກສາຫາລືກັນກ່ຽວກັບທິດທາງການຮ່ວມມືໃນຕໍ່ໜ້າ ໂດຍສະເພາະການສືບຕໍ່ແລກປ່ຽນການຢ້ຽມຢາມເຊິ່ງກັນແລະກັນຂອງການນຳຂັ້ນສູງ ແລະ ຂັ້ນກຳມາທິການຕ່າງໆເພື່ອແລກປ່ຽນບົດຮຽນການຈັດຕັ້ງປະຕິບັດບົດບາດການເຄື່ອນໄຫວຂອງອົງການນິຕິບັນຍັດ ໂດຍສະເພາະແມ່ນການແລກປ່ຽນບົດຮຽນໃນດ້ານການສ້າງ ແລະ ປັບປຸງກົດໝາຍ; ສອງຝ່າຍເຫັນດີເປັນເອກະພາບໃນການປັບປຸງບົດບັນທຶກການຮ່ວມມືລະຫວ່າງສອງສະພາແຫ່ງຊາດ ທີ່ຈະໝົດອາຍຸໃນປີ 2027, ເຫັນດີຈະສືບຕໍ່ຮ່ວມມືກັນປະຕິບັດພາລະບົດບາດຕິດຕາມກວດກາບັນດາໂຄງການລົງທຶນ ແລະ ໂຄງການຮ່ວມມືຂອງສອງປະເທດເປັນຕົ້ນ: ໂຄງການທ່າເຮືອວຸ້ງອາງ (Vũng Áng), ໂຄງການເສັ້ນທາງດ່ວນ ວຽງຈັນ-ຮ່າໂນ້ຍ ແລະ ທາງລົດໄຟ ລາວ-ຫວຽດນາມ ເຊິ່ງຈະເຮັດໃຫ້ມູນຄ່າທາງການຄ້າຂອງສອງປະເທດ ມີການເພີ່ມຂຶ້ນ, ຊ່ວຍໃຫ້ ສປປລາວ ສາມາດກາຍເປັນປະເທດເຊື່ອມໂຍງເຊື່ອມຈອດໃນພາກພື້ນ




## ຮັກສາການ...

(ຕໍ່ຈາກໜ້າ 1)

ປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ IV ອອກພັກການ-ຮັບອຸດໜູນບຳນານ ແລະ ການປະກາດກົງຈັກການຈັດຕັ້ງທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ນັ້ນຄື: ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ຊຸດທີ V; ໂດຍມີທ່ານ ອາດສະພັງທອງ ສີພັນດອນ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ, ທ່ານ ສີລິລາດທົງສິນ ທອງເພັງ ຮອງເລຂາຄະນະບໍລິຫານງານພັກ, ປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ, ບັນດາທ່ານໃນການນຳຂັ້ນຕ່າງໆຂອງນະຄອນຫຼວງ ພ້ອມບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ແຂກຖືກເຊີນ ເຂົ້າຮ່ວມ.

ໃນພິທີ, ທ່ານ ອາດສະພັງທອງ ສີພັນດອນ ໄດ້ລາຍງານສະພາບການເຄື່ອນໄຫວໃນໄລຍະ 6 ເດືອນຕົ້ນປີ ແລະ ແຜນຈຸດສຸມໃນ 6 ເດືອນທ້າຍປີ 2026 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ; ຈາກນັ້ນ, ທ່ານ ພູທອນ ແກ້ວດວງມະນີ ຄະນະປະຈຳພັກ, ຫົວໜ້າຄະນະຈັດຕັ້ງນະຄອນຫຼວງວຽງຈັນ ໄດ້ຂຶ້ນຜ່ານມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການອະນຸມັດໃຫ້ອະດີດການນຳຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ IV 2 ທ່ານ ອອກພັກການ-ຮັບອຸດໜູນບຳນານ. ພ້ອມນັ້ນ, ຍັງໄດ້ຜ່ານຂໍ້ຕົກລົງຂອງຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ ວ່າດ້ວຍການອະນຸມັດໃຫ້ບັນດາທ່ານການນຳຄະນະກຳມະການຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ IV ຈຳນວນ 3 ທ່ານ ອອກພັກການ-ຮັບອຸດໜູນບຳນານ, ມະຕິຂອງຄະນະປະຈຳສະພາປະຊາຊົນນະຄອນຫຼວງວຽງຈັນ ວ່າດ້ວຍການແຕ່ງຕັ້ງຮອງປະທານຄະນະກຳມະການສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ການແຕ່ງຕັ້ງຮອງຫົວໜ້າຫ້ອງວ່າການສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V.

ທ່ານ ວຽງແກ້ວ ວັນນະຈັກ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ຂຶ້ນຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 181/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການສ້າງຕັ້ງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ຈຳນວນ 18 ທ່ານ ໂດຍແມ່ນທ່ານ ອາດສະພັງທອງ ສີພັນດອນ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ແລະ ທ່ານ ທະນົງໄຊ ຄຸດໄພທູນ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1.

ໃນພິທີດັ່ງກ່າວ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ມີການໂອ້ລົມ ໂດຍໄດ້ຕີລາຄາສູງ ແລະ ຊົມເຊີຍບັນດາຜົນງານແລະຜົນສຳເລັດຮອບດ້ານຂອງນະຄອນຫຼວງ ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກ, ອຳນາດການປົກຄອງຂອງນະຄອນຫຼວງ ຕະຫຼອດໄລຍະຜ່ານມາ ແລະ ໃຫ້ທິດຊີ້ນຳການເຄື່ອນໄຫວຂອງສະພາປະຊາຊົນນະຄອນຫຼວງ, ການປະຕິບັດໜ້າທີ່ ແລະ ພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໂດຍເນັ້ນໜັກໃຫ້ເອົາໃຈໃສ່ການປະຕິບັດກົນໄກປະສານງານລະຫວ່າງສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ, ການປະຕິບັດຕາມ 3 ພາລະບົດບາດຂອງຕົນ ເພື່ອເຮັດສຳເລັດໜ້າທີ່ການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃຫ້ໄດ້ຢ່າງເຕັມສ່ວນ, ປະກອບສ່ວນສ້າງນະຄອນຫຼວງ ໃຫ້ສົມເປັນໝາກຫົວໃຈຂອງຊາດ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 5)

ເກືອດຫ້າມລະເບີດລູກຫວ່ານ ຮອບວຽນທີ 3 ໃຫ້ດີ ໂດຍຖືເປັນໂອກາດດຶງດູດແລະສົ່ງເສີມການທ່ອງທ່ຽວລາວ.

12. ສືບຕໍ່ຂະຫຍາຍເຄືອຂ່າຍໂທລະຄົມ, ສັນຍານອິນເຕີເນັດ ໄປສູ່ເຂດຫ່າງໄກສອກຫຼີກທີ່ຍັງບໍ່ທັນມີສັນຍານ, ຊຸກຍູ້ການນຳໃຊ້ລະບົບ (G-Chat) ແລະ ລະບົບບໍລິຫານດີຈີຕອນ ເພື່ອຫັນເປັນລັດດີຈີຕອນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

13. ສືບຕໍ່ປັບປຸງກົນໄກແລະວິທີການ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄວ ແລະ ໄດ້ຫຼາຍຂຶ້ນ, ທັງສຸມໃສ່ແກ້ໄຂວັດຖຸມີຄ່າ ແລະ ຊັບສິນທີ່ຍຶດໄດ້ຈາກຄະດີຕ່າງໆ ໃຫ້ໄວຂຶ້ນ.

14. ສືບຕໍ່ກະກຽມການເຄື່ອນໄຫວຕ່າງປະເທດຂອງການນຳຂັ້ນສູງ ແລະ ຕ້ອນຮັບການມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ຂອງການນຳຂັ້ນສູງປະເທດເພື່ອນມິດ ໃຫ້ໄດ້ຮັບຜົນດີ.

ໃນຕອນທ້າຍ, ທ່ານນາຍົກລັດຖະມົນຕີໄດ້ຮຽກຮ້ອງບັນດາທ່ານສະມາຊິກລັດຖະບານ ຈົ່ງນຳເອົາແຜນວຽກຈຸດສຸມປະຈຳເດືອນກັນຍາທີ່ກອງປະຊຸມໄດ້ເອກະພາບກັນ ໄປປັບປຸງເຂົ້າໃນແຜນວຽກຂອງຂະແໜງການຕົນໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງການຈັດຕັ້ງ ກໍຄືບຸກຄະລາກອນແຕ່ລະຂັ້ນ ແລະ ມີຄາດໝາຍເວລາສຳເລັດຊັດເຈນ.

**(ຂ່າວ ແລະ ພາບ: ກົມປະຊາສຳພັນ ຫສນຍ)**




***# ບ່າວກະບື***

**ຊາຍໜຸ່ມ**ໄປຕະຫຼາດ ແລະ ຊື້ສະລິບປະເພດສ່ອງຊອດ ແລ້ວເອົາໄປຕ້ອນຊູ້ຮັກ, ເຂົາເວົ້າແກມຢອກອອກມາວ່າ: "ນ້ອງຢ່າໃຫ້ຊາຍໃດຍ່ອງຍີ່ສະລິບຜືນນີ້ເດີ, ສັນຍາໄດ້ບໍ່?"

ຝ່າຍຜູ້ສາວຕອບວ່າ: "ອ້າຍບໍ່ຕ້ອງເປັນຫ່ວງ, ນ້ອງຊິປົດມັນອອກກ່ອນດອກ"

***# BAOKBU***

A young man went shopping and bought a see-through underwear: He presented it to his sweetheart and said jokingly: "Don't let any man squesze the underwear... promise ?"

The girl replied: "Don't worry, I'll take it off first"

**ຜູ້ຊີ້ນຳ**
ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

**ຄະນະຂັນນາທິການ**
ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງຂັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ